NORBOUASAMAI et al. (2023). Souphanouvong University Journal of Multidisciplinary Research and Development. ISSN 2521-0653. Volume 9. Issue 3. Jul - Sep. 2023. Page 74 – 84

# ສຶກສາຄວາມຄິດເຫັນຂອງຊາວກະສິກອນ ຕໍ່ກັບການປູກຖົ່ວເຫຼືອງຝັກຂຽວສົດ ຂອງບໍລິສັດ ຫຼັງການເກັບກ່ຽວເຂົ້ານາ ຢູ່ບ້ານຫົວນາ ເມືອງພຽງ ແຂວງໄຊຍະບູລີ

**ຟອງສະໝຸດ ໜໍ່ບົວສະໄໝ[1], ພອນສະຫວັນ ພຸດທະໄຊ[2], ພອນປະເສີດ ສີຫາ[3], ກິຊົງ ຈາເຊັ່ງຊົງ[4]**

*ສາຂາກະສິກຳ ແລະ ສິ່ງແວດລ້ອມປ່າໄມ້, ຄະນະກະເສດສາດ ແລະ ຊັບພະຍາກອນປ່າໄມ້, ມະຫາວິທະຍາໄລສຸພານຸວົງ, ສ ປປ ລາວ*

[1] ***ຜູ້ຕິດຕໍ່ພົວພັນ:*** *ຟອງສະມຸດ ໜໍ່ບົວສະໄໝ, ບ່ອນເຮັດວຽກ: ຂະແໜງຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ, ພະແນກກະສິກຳ ແລະ ປ່າໄມ້ ແຂວງໄຊຍະບູລີ, ເບີໂທ. +856 20 54477778, ອີເມວ: fmouth.nbsm@gmail.com*

[2,4] *ພາກວິຊາວິທະຍາສາພືດ, ຄະນະກະເສດສາດ ແລະ ຊັບພະຍາກອນປ່າໄມ້, ມະຫາວິທະຍາໄລສຸພານຸວົງ*

[3] *ພະແນກກະສິກຳ ແລະ ປ່າໄມ້ ແຂວງໄຊຍະບູລີ*

***ຂໍ້ມູນບົດຄວາມ:***

*ການສົ່ງບົດ: 23 ກຸມພາ 2023*

*ການປັບປຸງ: 27 ມິຖຸນາ 2023*

*ການຕອບຮັບ: 21 ກໍລະກົດ 2023*

## ບົດຄັດຫຍໍ້

ໃນການສຶກສາຄວາມຄິດເຫັນຂອງຊາວກະສິກອນ ຕໍ່ກັບການປູກຖົ່ວເຫຼືອງຝັກຂຽວສົດ ຂອງບໍລິສັດ ໂດຍມີຈຸດປະສົງ ແມ່ນສຶກສາຄວາມເພິ່ງພໍໃຈຂອງຊາວກະສິກອນທີ່ມີຕໍ່ກັບການປູກຖົ່ວເຫຼືອງຝັກຂຽວສົດ ແລະ ພ້ອມທັງ ສຶກສາບັນຫາ, ອຸປະສັກ ແລະ ແນວທາງແກ້ໄຂບັນຫາ. ໂດຍໄດ້ມີການສຶກສາແມ່ນຢູ່ທີ່ ບ້ານຫົວນາ ເມືອງພຽງ ແຂວງໄຊຍະບູລີ ດ້ວຍຮູບແບບການໃຊ້ຟອມປະເມີນທາງດ້ານຂໍ່ມູນທົ່ວໄປ, ຄວາມເພິ່ງພໍໃຈໃນແຕ່ລະດ້ານ ແລະ ບັນຫາ ແລະ ອຸປະສັກຕ່າງໆ. ຈາກຜົນການສຶກສາສໍາພາດຊາວກະສິກອນກຸ່ມຕົວຢ່າງ ທັງໝົດ ຈໍານວນ 52 ຄົນ ໄດ້ສະແດງໃຫ້ເຫັນວ່າ ຜົນປະໂຫຍດ ແມ່ນມີຄວາມເພິ່ງພໍໃຈຕໍ່ກັບການປູກຖົ່ວເຫຼືອງຝັກຂຽວສົດຂອງບໍລິສັດ ທີ່ມີຄະແນນຄວາມເພິ່ງພໍໃຈຫຼາຍ ດ້ວຍຄ່າສະເລ່ຍ 4.07 ຮອງລົງມາແມ່ນ ດ້ານການໃຫ້ບໍລິການ ທີ່ມີຄະແນນຄວາມເພິ່ງພໍໃຈຢູ່ທີ່ 3.58. ຍິ່ງໄປກວ່ານັ້ນ ທັງສອງດ້ານ ແມ່ນນອນຢູ່ໃນເປີເຊັນຄວາມເພິ່ງພໍໃຈສູງເຖິງ 71.63-81.40%. ນັ້ນເປັນໂຕບົ່ງບອກໃຫ້ເຫັນວ່າ ຊາວກະສິກອນສ່ວນໃຫຍ່ແມ່ນມີຄວາມເພິ່ງໃຈຫຼາຍຕໍ່ກັບການປູກຖົ່ວເຫຼືອງຝັກຂຽວສົດຂອງບໍລິສັດ. ແຕ່ເຖິງຢ່າງໃດກໍ່ຕາມ ໃນການສຶກສາບັນຫາ, ອຸປະສັກ, ແນວທາງແກ້ໄຂ ແລະ ຂໍ້ສະເໜີຂອງຊາວກະສິກອນໄດ້ສະແດງໃຫ້ເຫັນວ່າ ບັນຫາທີ່ເປັນບຸລິມະສິດອັນດັບໜຶ່ງ ແມ່ນ ສິ່ງເສດເຫຼືອຂີ້ເຫຍື້ອກວມເອົາ 71.15%, ຮອງລົງມາແມ່ນການນໍາໃຊ້ສານເຄມີ 59.61% ແລະ ໜ້ອຍທີ່ສຸດຄື ການກະກຽມດິນມີການໄຖດິນເລິກຫຼາຍ 55.78%. ສໍາລັບຂໍ້ສະເໜີຂອງຊາວກະສິກອນ ແມ່ນຢາກໃຫ້ບໍລິສັດສົ່ງເສີມໃຫ້ປະຊາຊົນປູກ ແລ້ວຂາຍໃຫ້ທາງບໍລິສັດ, ເພີ່ມຄ່າເຊົ່າດິນນາໃຫ້ສູງຂຶ້ນກວ່າເກົ່າ ຄິດເປັນ 51.92% ແລະ ສະເໜີໃຫ້ບໍລິສັດ, ພາກລັດ ຈັດເຝິກອົບຮົມໃຫ້ປະຊາຊົນຮັບຮູ້ກ່ຽວກັບຂະບວນການປູກຖົ່ວເຫຼືອງ ໃຫ້ປະຊາຊົນຮັບຮູ້ຢ່າງທົ່ວເຖິງ ຄິດເປັນ 48.08% ຕາມລໍາດັບ.

**ຄໍາສັບສໍາຄັນ:** *ຄວາມເພິ່ງພໍໃຈ, ການປູກຖົ່ວເຫຼືອງເກັບຝັກຂຽວສົດ, ບັນຫາຜົນກະທົບ*

# The Opinions of Farmers on the Cultivation of Fresh Green Soybeans of the Company after Harvesting Rice in Huana Village, Phieng District, Xayabouly Province

**Fongsamouth NORBOUASAMAI[1], Phonesavanh PHOUTHAXAY[2], Phonephasred SIHAR[3], Keesong chasensong[4]**

*Agriculture and Forest Environment, Faculty of Agriculture and Forest Resource, Souphanouvong University, Lao PDR*

***Correspondence:***
*Fongsamouth NORBUASAMAI, workplace: Section of Agricultural Land Management, Provincal of Agriculture and Forestry Organization, Xayabouly Province, Tel: +856 20 54477778, Email: fmouth.nbsm@gmail.com*
*[2,4]Plant Science Department, Faculty of Agriculture and Forest Resource, Souphanouvong University*
*[3]Provincial of Agriculture and Forestry Office, Sayaboury province*

***Article Info:***
*Submitted: Feb 23, 2023*
*Revised: Jun 27, 2023*
*Accepted: Jul 21, 2023*

## Abstract

Studying the opinions of farmers towards the cultivation of green soybeans of the company with the purpose of study the satisfaction of farmers towards the cultivation of green soybeans and study the problems, obstacles, and solutions. This study was conducted in Huana Village, Phieng District, Xayabouly Province. The results of the study showed that interviews were implemented with a sample of 52 farmers, using evaluation form for general information, satisfaction in each aspect, problems, and obstacles. Through inquiry and evaluation of satisfaction, it has been shown that the benefit side is satisfied with the company's green soybean cultivation with highest of satisfaction with an average value of 4.07, followed by the service aspect with a satisfaction of 3.58 lying in a lot of satisfaction as well. Moreover, both of each aspect was have a higher present of aspect as 71.63-81.40%, this value was indicated that all farmers were aspect to cultivation of green soybeans of the company. The results of the study of problems, obstacles, solutions and suggestions of farmers, there were 52 interviewees who showed the opinion that: the priority problem was garbage waste 71.15%, ordered by using chemicals 59.61% and the last item was the preparation of soil with depth plowing 55.78%. For the requirements of the farmers, they want the company to encourage people to grow and sell soybean to the company. To increase their rental fee for growing soybeans approximately 51.92%, and to propose the company and government section organize training for farmers to understand about the process of growing soybeans and make people aware of it, which is showed 48.08% respectively.

**Keywords:** *Satisfaction, Soybean cultivation for harvesting fresh green pods, effective problem*

## 1. ພາກສະເໜີ

ການປູກຖົ່ວເຫຼືອງເກັບຝັກຂຽວສົດ ເປັນພືດທີ່ມີຄວາມສຳຄັນທາງດ້ານເສດຖະກິດຊະນິດໜຶ່ງ ເນື່ອງຈາກມີອາຍຸການເກັບກ່ຽວສັ້ນສາມາດປູກໄດ້ຕະຫຼອດປີ ໃນສະພາບອາກາດທີ່ບໍ່ຮ້ອນອົບເອົ້າ ແລະ ບໍ່ໜາວຫຼາຍເກີນໄປ ໃຫ້ຜົນຕອບແທນສູງ ແລະ ວ່ອງໄວ, ເປັນພືດທີ່ມີຄຸນຄ່າທາງອາຫານສູງ ຊາວກະສິກອນຈຶ່ງນິຍົມປູກຫຼາຍ ເພື່ອບໍລິໂພກ ແລະ ສົ່ງອອກ, ປັດຈຸບັນ ປະເທດລາວ ແມ່ນໄດ້ມີການຜະລິດເພື່ອສົ່ງອອກໄປ ສປ ຈີນ ເປັນຈຳນວນຫຼວງຫຼາຍ ໃນຮູບແບບຖົ່ວເຫຼືອງຝັກຂຽວສົດ ເຊິ່ງຈຳເປັນຕ້ອງມີການພັດທະນາລະບົບການຜະລິດຖົ່ວເຫຼືອງຝັກສົດຂຽວ ເພື່ອເພີ່ມຜົນຜະລິດ ແລະ ໃຫ້ມີປະລິມານສົ່ງອອກຫຼາຍຂຶ້ນ (Somsak, 2020).

ໃນໄລຍະ 4-5 ປີຜ່ານມາການປູກຖົ່ວເຫຼືອງຢູ່ ແຂວງໄຊຍະບູລີ ມີແນວໂນ້ມສູງຂຶ້ນ ເນື່ອງຈາກມີການຂະຫຍາຍພື້ນທີ່ປູກຫຼາຍ ເພາະຜົນຕອບແທນທີ່ໄດ້ຮັບແມ່ນຂ້ອນຂ້າງສູງກວ່າພືດອື່ນໆ ແລະ ຫາກຕົ້ນຖົ່ວເຫຼືອງຝັກສົດໄດ້ຮັບການເອົາໃຈໃສ່ດູແລຢ່າງດີແລ້ວ ຜົນຜະລິດກໍ່ສູງຂຶ້ນ (Field and Oïl corps promotion croups, 1997). ການປູກຖົ່ວເຫຼືອງໃນລະດູແລ້ງຫຼັງຈາກເກັບກ່ຽວເຂົ້ານາ ແມ່ນສາມາດປູກໃນລະດູແລ້ງໄດ້ດີກວ່າລະດູຝົນ ເນື່ອງຈາກການປູກໃນລະດູແລ້ງສາມາດຄວບຄຸມການໃຫ້ນ້ຳໄດ້ດີ ໃນຂະນະທີ່ລະດູຝົນການປູກຖົ່ວເຫຼືອງມັກຈະມີບັນຫາເລື່ອງໄຟນ້ຳຖ້ວມ (Aned, 2018).

ສຳລັບການປູກຖົ່ວເຫຼືອງຝັກຂຽວສົດ ທີ່ປູກຢູ່ບ້ານຫົວນາ ເມືອງພຽງ ແຂວງໄຊຍະບູລີ ເພື່ອເປັນສິນຄ້າສົ່ງອອກໄປປະເທດຈີນ ແມ່ນບໍລິສັດຈະນຳໃຊ້ແນວພັນທີ່ມາຈາກ ສປ ຈີນ ມີການຕອບສະໜອງໄດ້ດີຕໍ່ກັບສະພາບແວດລ້ອມ, ປຸ໋ຍ ແລະ ສານເຄມີ ນັບເປັນປັດໄຈການຜະລິດທີ່ສຳຄັນທີ່ມີຜົນກະທົບຕໍ່ກັບການໃຫ້ຜົນຜະລິດທັງທາງດ້ານປະລິມານ ແລະ ຄຸນນະພາບ, ການໃຊ້ຝຸ່ນ-ປຸ໋ຍ ໃນຖົ່ວເຫຼືອງຝັກສົດ (Ratsata, 2016). ປັດຈຸບັນແມ່ນໄດ້ໃຊ້ຕາມແບບຂອງບໍລິສັດຜູ້ທີ່ລົງທຶນສົ່ງອອກ ເປັນຜູ້ກຳນົດໃສ ແລະ ຍັງບໍ່ທັນມີເຕັກນິກທາງດ້ານເອກະສານອ້າງອີງສຳລັບການໃສ່ຝຸ່ນ-ປຸ໋ຍຂອງບໍລິສັດ, ດັ່ງນັ້ນ ການໃສ່ປຸ໋ຍ, ການໃສ່ສານເຄມີ ເພື່ອບຳລຸງຕົ້ນຖົ່ວເຫຼືອງ ແມ່ນບໍ່ພຽງແຕ່ເພີ່ມປະລິມານ ແລະ ຄຸນນະພາບທາງດ້ານຜົນຜະລິດເທົ່ານັ້ນ ແຕ່ກົງກັນຂ້າມມັນຍັງໄດ້ສົ່ງຜົນກະທົບທາງກົງ ແລະ ທາງອ້ອມ ຕໍ່ກັບສະພາບສິ່ງແວດລ້ອມ-ສັງຄົມ (Ratsaphaphon, 2017).

ການໃຊ້ປຸ໋ຍເຄມີ, ສານເຄມີກຳຈັດສັດຕູພືດ ທາງດ້ານກະສິກຳບໍ່ພຽງແຕ່ກໍ່ໃຫ້ເກີດຜົນກະທົບໂດຍກົງໃນການກຳຈັດສັດຕູພືດເທົ່ານັ້ນ ແຕ່ຍັງກໍ່ໃຫ້ເກີດຜົນກະທົບທາງອ້ອມຕໍ່ກັບສິ່ງແວດລ້ອມ ແລະ ລະບົບນິເວດ ໂດຍສະເພາະໃນດິນ, ນ້ຳ, ອາກາດ, ສິ່ງທີ່ມີຊີວິດ ແລະ ໃນລະບົບນິເວດອື່ນໆທີ່ຢູ່ໃກ້ຄຽງ ອາດເຮັດໃຫ້ເກີດຜົນເສຍຕໍ່ສຸຂະພາບຂອງມະນຸດ ແລະ ກໍ່ໃຫ້ເກີດອັນຕະລາຍຕໍ່ສິ່ງທີ່ມີຊີວິດໃນລະບົບນິເວດອີກດ້ວຍ (Surveying center and the planning of agricultural land use, 2020-2021).

ເນື່ອງຈາກຖົ່ວເຫຼືອງຝັກສົດເປັນພືດອາຍຸສັ້ນ ເຮັດໃຫ້ສາມາດປູກເປັນພືດຮ່ວມກັບພືດຫຼັກຊະນິດອື່ນໄດ້ເຊັ່ນ: ປູກໝູນ ວຽນໃນນາເຂົ້າ ແລະ ພືດອື່ນໆ ການປູກພືດຖົ່ວເຫຼືອງຝັກສົດ ແມ່ນເປັນພືດຕະກຸນທີ່ມີຄຸນສົມບັດໃນການປັບປຸງດິນ ເຮັດໃຫ້ໄດ້ຮັບຜົນດີໃນການປູກທີ່ມີຜົນຕໍ່ການຮັກສາ ແລະ ເພີ່ມຄວາມອຸດົມສົມບູນໃຫ້ກັບດິນ (Bounhom, 2019). ຊ່ວຍແກ້ບັນຫາໃຫ້ກັບດິນໃນພື້ນທີ່ໆມີບັນຫາຂາດຄວາມອຸດົມສົມບູນຂອງດິນ ອັນເປັນຂໍ້ຈຳກັດສຳຄັນຂອງຊາວກະສິກອນໃນການຜະລິດພືດ ເຊິ່ງຄຸນສົມບັດນີ້ບໍ່ມີໃນພືດເສດຖະກິດຊະນິດອື່ນ ແຕ່ຢ່າງໃດກໍ່ຕາມໃນການປູກຖົ່ວເຫຼືອງຝັກສົດນີ້ ກໍ່ຍັງມີບັນຫາ ແລະ ອຸປະສັກຫຼາຍດ້ານກ່ຽວກັບຜົນກະທົບທາງກົງ ແລະ ທາງອ້ອມຕໍ່ສະພາບແວດລ້ອມ.

ການປູກຖົ່ວເຫຼືອງຝັກສົດ ຍັງເປັນການແກ້ໄຂບັນຫາການເຊື່ອມໂຊມຂອງດິນອີກດ້ວຍ ເຊັ່ນ: ການເຮັດນາຢ່າງຕໍ່ເນື່ອງເປັນເວລາຫຼາຍປີຕິດຕໍ່ກັນ ສົ່ງຜົນໃຫ້ດິນເຊື່ອມໂຊມ, ການປູກພືດໝູນວຽນ (ປູກຖົ່ວເຫຼືອຝັກສົດ) ຈຶ່ງເປັນທາງອອກ. ນອກຈາກນີ້ພືດຕະກຸນຖົ່ວນັ້ນຍັງມີຈຸລິນຊີໃນຮາກຫຼາຍ (ໄຣໂຊບຽມ) ຊ່ວຍດຶງໄຮໂດຼເຈນລົງສູ່ພື້ນດິນ ແລະ ຫຼັງຈາກເກັບກ່ຽວແລ້ວ ຍັງສາມາດໄຖກົບຕົ້ນຖົ່ວເຫຼືອງໃຫ້ກາຍເປັນປຸ໋ຍພືດສົດ ຊ່ວຍເພີ່ມອິນຊີວັດຖຸໃນດິນອີກດ້ວຍ (National Agricultural Promotion Center, 1995).

ຈາກການດຳເນີນການປູກຖົ່ວເຫຼືອງມາເປັນໄລຍະເວລາຫຼາຍປີ ຢູ່ເມືອງພຽງ ແຂວງໄຊຍະບູລີ ຍັງບໍ່ມີການປະ

ເມີນຄວາມເພິ່ງພໍໃຈຂອງຊາວກະສິກອນຕໍໂຄງການດັ່ງກ່າວ , ດັ່ງນັ້ນ ຂ້າພະເຈົ້າຈຶ່ງສົນໃຈສຶກສາກ່ຽວກັບຄວາມເພິ່ງພໍໃຈຂອງຊາວກະສິກອນຕໍ່ການປູກຖົ່ວເຫຼືອງຂອງບໍລິສັດລົງທຶນຕ່າງປະເທດ ໂດຍຂ້າພະເຈົ້າໄດ້ເຮັດການສຶກສາວິເຄາະຂໍ້ມູນ, ສະຫຼຸບຜົນ ລວມທັງສັງລວມບັນດາຂໍ້ສະເໜີແນະ ອັນຈະເປັນປະໂຫຍດຕໍ່ເມືອງພຽງ ແຂວງໄຊຍະບູລີ ໃນການນໍາຜົນການວິໄຈທີ່ໄດ້ຮັບໄປປະກອບການພິຈາ ລະນາຜົນການປະຕິບັດງານທີ່ຜ່ານມາ ແລະ ຜົນລັບທີ່ເກີດຈາກງານວິໄຈອັນສະທ້ອນຄວາມເພິ່ງພໍໃຈຂອງຊາວກະສິກອນທີ່ເຂົ້າຮ່ວມໂຄງການ ເພື່ອສາມາດດໍາເນີນການແກ້ໄຂປັນຫາຕ່າງໆຂອງການເຂົ້າມາລົງທຶນປູກຖົ່ວເຫຼືອງຂອງບໍລິສັດໃນຄັ້ງຕໍ່ໄປໃຫ້ດີຍິ່ງຂຶ້ນ, ສອດຄ່ອງກັບສາເຫດ ແລະ ເຫດຜົນຄວາມຕ້ອງການຂອງປະຊາຊົນຫຼາຍຂຶ້ນ ທີ່ມຸ່ງສູ່ການຕອບສະໜອງຄວາມຕ້ອງການຂອງປະຊາຊົນຢ່າງທົ່ວເຖິງ, ເທົ່າທຽມ ແລະ ເປັນທໍາ ເພື່ອໃຫ້ປະຊາຊົນມີຊີວິດຄວາມເປັນຢູ່ທີ່ດີຕາມແຜນພັດທະນາເສດຖະກິດຂອງແຂວງທີ່ວາງອອກ.

ການປະເມີນຄວາມເພິ່ງພໍໃຈເປັນການປະເມີນຄວາມຮ່ວມມືຮ່ວມໃຈ ແລະ ຄວາມເຂົ້າໃຈອັນດີຕໍ່ກັນ, ຄວາມເພິ່ງພໍໃຈເປັນຜົນຂອງການຮັບຮູ້ ແລະ ປະເມີນຄຸນນະພາບຂອງການບໍລິການໃນສິ່ງທີ່ຜູ້ຮັບບໍລິການຄາດຫວັງວ່າຄວນຈະໄດ້ຮັບ ແລະ ສິ່ງທີ່ຜູ້ຮັບບໍລິການໄດ້ແທ້ຈິງ.

ຈາກເຫດຜົນຂ້າງເທິງຂ້າພະເຈົ້າຈຶ່ງມີຈຸດປະສົງ ເພື່ອປະເມີນຄວາມເພິ່ງພໍໃຈຂອງຊາວກະສິກອນ ບ້ານຫ້ວຍນາ ເມືອງພຽງ ແຂວງໄຊຍະບູລີ ຕໍ່ກັບການເຂົ້າຮ່ວມໂຄງການປູກຖົ່ວເຫຼືອງຝັກຂຽວສົດຂອງບໍລິສັດ ໃສ່ທົ່ງນາ ຫຼັງການເກັບກ່ຽວເຂົ້ານາ ແລະ ຊອກຫາວິທີທາງແກ້ໄຂບັນຫາ, ອຸປະສັກ ແລະ ຂໍ້ສະເໜີແນະ ເພື່ອເປັນຂໍ້ມູນໃນການນໍາໄປສົ່ງເສີມໃນອະນາຄົດ.

## 2. ອຸປະກອນ ແລະ ວິທີການ

### 2.1 ອຸປະກອນ

ການວິໄຈຄັ້ງນີ້ເປັນການວິໄຈໃນຮູບແບບປະລິມານ (Quantitative Research) ເກັບລວບລວມຂໍ້ມູນໂດຍໃຊ້ແບບສໍາພາດ (Questionnaire). ເຊິ່ງອຸປະກອນທທີໃຊ້ປະກອບດ້ວຍ: ແບບຟອມສໍາພາດ, ກ້ອງຖ່າຍຮູບ, ປຶ້ມບັນທຶກ ແລະ ອຸກະກອນບັນທຶກຕ່າງໆ.

### 2.2 ວິທີການສຶກສາ

ການສຶກສາຄັ້ງນີ້ແມ່ນໄດ້ປະຕິບັດ ຢູ່ບ້ານຫ້ວຍນາ ເມືອງພຽງ ແຂວງໄຊຍະບູລີ, ເຊິ່ງເປັນການສຶກສາໃນຮູບແບບປະລິມານ (Quantitative Research) ເກັບລວບລວມຂໍ້ມູນໂດຍໃຊ້ແບບສໍາພາດ (Questionnaire) ເປັນການວິໄຈທີ່ມີວັດຖຸປະສົງ (1) ສຶກສາລະດັບຄວາມເພິ່ງພໍໃຈຂອງຊາວກະສິກອນຕໍ່ການປູກຖົ່ວເຫຼືອງຂອງບໍລິສັດ ແລະ (2) ສຶກສາບັນຫາ, ອຸປະສັກ ແລະ ແນວທາງແກ້ໄຂບັນຫາ ໂດຍສະຖານທີ່ສຶກສາແມ່ນຢູ່ ບ້ານຫ້ວຍນາ ເມືອງພຽງ ແຂວງໄຊຍະບູລີ ໂດຍມີການດໍາເນີນການຄົ້ນຄວ້າວິໄຈດັ່ງນີ້:

### 2.3 ປະຊາກອນ ແລະ ກຸ່ມຕົວຢ່າງ

ປະຊາກອນທີ່ໃຊ້ໃນການສຶກສາຂໍ້ມູນຄັ້ງນີ້ແມ່ນກໍານົດເອົາຊາວກະສິກອນແບບຊຸມເອົາ (ໂດຍໃຊ້ຕາຕະລາງຂອງ krejcie and morgan) ຈໍານວນ 52 ຕົວຢ່າງ ຢູ່ບ້ານຫ້ວຍນາ ເມືອງພຽງ ແຂວງໄຊຍະບູລີ ເຊິ່ງເປັນບ້ານທີ່ບໍລິສັດປູກຖົ່ວເຫຼືອງເກັບຝັກຂຽວສົດ

### 2.4 ເຄື່ອງມືທີ່ໃຊ້ໃນການເກັບລວບລວມຂໍ້ມູນ

ເຄື່ອງມືທີ່ໃຊ້ໃນການເກັບລວບລວມຂໍ້ມູນ ມີແບບສອບຖາມຄວາມເພິ່ງພໍໃຈຂອງຊາວກະສິກອນ ເຊິ່ງມີລາຍລະອຽດດັ່ງນີ້:

- ພາກທີ 1: ຂໍ້ມູນທົ່ວໄປຂອງຜູ້ຕອບແບບສອບຖາມ ເປັນຂໍ້ມູນເບື້ອງຕົ້ນຂອງຜູ້ຕອບແບບສອບຖາມໃນຫົວຂໍ້ທີ່ກ່ຽວຂ້ອງກັບເພດ, ອາຍຸ, ລະດັບການສຶກສາ, ສະຖານະພາບ, ອາຊີບ, ລາຍຮັບສ່ວນໃຫຍ່ໄດ້ມາຈາກໃສ, ລາຍໄດ້ສະເລ່ຍຕໍ່ເດືອນ.
- ພາກທີ 2: ເປັນຂໍ້ມູນກ່ຽວກັບຄວາມເພິ່ງພໍໃຈຂອງຊາວກະສິກອນທີປະກອບດ້ວຍ:

ຄວາມເພິ່ງພໍໃຈດ້ານການໃຫ້ບໍລິການ ຂອງໂຄງການປູກຖົ່ວເຫຼືອງ ຢູ່ບ້ານຫ້ວຍນາ ເມືອງພຽງ ແຂວງໄຊຍະບູລີ ມີ 21 ຂໍ້ ແລະ ຄວາມເພິ່ງພໍໃຈ ດ້ານການຮັບຜົນປະໂຫຍດ ຈາກການປູກຖົ່ວເຫຼືອງຝັກຂຽວສົດ ຢູ່ບ້ານຫ້ວຍນາ ເມືອງພຽງ ແຂວງໄຊຍະບູລີ ມີ 17 ຂໍ້ ໂດຍເກນວັດລະດັບຄວາມພໍໃຈອີງໃຫ້ຮູບແບບຂອງ Linkert ໂດຍມີການກໍານົດດັ່ງນີ້:

| | |
|---|---|
| ມີລະດັບຄວາມເພິ່ງພໍໃຈຫຼາຍສຸດ | ເທົ່າກັບ 5 ຄະແນນ |
| ມີລະດັບຄວາມເພິ່ງພໍໃຈທີ່ຫຼາຍ | ເທົ່າກັບ 4 ຄະແນນ |
| ມີລະດັບຄວາມເພິ່ງພໍໃຈປານກາງ | ເທົ່າກັບ 3 ຄະແນນ |
| ມີລະດັບຄວາມເພິ່ງພໍໃຈນ້ອຍ | ເທົ່າກັບ 2 ຄະແນນ |

ມີລະດັບຄວາມເພິ່ງພໍໃຈນ້ອຍທີ່ສຸດ ເທົ່າກັບ 1 ຄະແນນ

- ພາກທີ 3 : ບັນຫາ, ອຸປະສັກ, ແນວທາງແກ້ໄຂ ແລະ ຂໍ້ສະເໜີແນະ ເປັນຄໍາຖາມແບບເປີດ ໂດຍໃຫ້ຜູ້ຕອບແບບສອບຖາມໄດ້ສະແດງຄວາມຄິດເຫັນໃນ ບັນຫາ, ອຸປະສັກ, ແນວທາງແກ້ໄຂ ແລະ ຂໍ້ສະເໜີແນະ.

### 2.5 ການເກັບຂໍ້ມູນ

ໄດ້ດໍາເນີນການເກັບລວບລວມຂໍ້ມູນໃນການວິໄຈດ້ວຍການແຈກຢາຍແບບສອບຖາມໂດຍກົງໃຫ້ກັບກຸ່ມຕົວຢ່າງຈໍານວນ 52 ຕົວຢ່າງ ທີ່ເປັນຊາວກະສິກອນທີ່ໃຫ້ເຊົ່າດິນນາ ແລະ ຊີ້ແຈງລາຍລະອຽດໃນການຕອບແບບສອບຖາມ ແລະ ຮັບແບບສອບຖາມກັບຄືນດ້ວຍຕົວເອງ ແລະ ບັນທຶກຂໍ້ມູນ ແລ້ວນໍາເອົາຂໍ້ມູນທີ່ໄດ້ມາຈັດໝວດໝູ່, ລົງລະຫັດຂໍ້ມູນ ແລະ ກວດສອບຄວາມສົມບູນຂອງແບບຟອມສໍາພາດ ຈາກນັ້ນ ນໍາຂໍ້ມູນໄປວິເຄາະທາງສະຖິຕິດ້ວຍໂປແກມ SPSS.

### 2.6 ການວິເຄາະຂໍ້ມູນທາງສະຖິຕິ

ຜູ້ວິໄຈດໍາເນີນການວິເຄາະຂໍ້ມູນທົ່ວໄປຂອງຊາວກະສິກອນໂດຍການໃຊ້ສະຖິຕິເຊີງພັນລະນາ (Descriptive statistics) ໄດ້ແກ່ ຄວາມຖີ່ ແລະ ຄ່າເປີເຊັນ (%) ເຮັດການວິເຄາະຂໍ້ມູນຄວາມເພິ່ງພໍໃຈຂອງຊາວກະສິກອນທີ່ເຂົ້າຮ່ວມໃນການໃຫ້ເຊົ່າດິນ ໂດຍໃຊ້ສະຖິຕິເຊີງປະລິມານ (Quantitative statistics) ໄດ້ແກ່: ຄ່າສະເລ່ຍ ແລະ ຄ່າບ່ຽງເບນມາດຕະຖານ ແລະ ແປຄວາມໝາຍຄ່າສະເລ່ຍຕາມຄໍາແນະນໍາຂອງ ບຸນຊົມ ສີສະອາດ (2002) ດັ່ງນີ້:

ຄ່າສະເລ່ຍ 4.51-5.00 ໝາຍເຖິງ ມີຄວາມເພິ່ງພໍໃຈຢູ່ໃນລະດັບຫຼາຍທີ່ສຸດ

ຄ່າສະເລ່ຍ 3.51-4.50 ໝາຍເຖິງ ມີຄວາມເພິ່ງພໍໃຈຢູ່ໃນລະດັບຫຼາຍ

ຄ່າສະເລ່ຍ 2.51-3.50 ໝາຍເຖິງ ມີຄວາມເພິ່ງພໍໃຈປານກາງ

ຄ່າສະເລ່ຍ 1.51-2.50 ໝາຍເຖິງ ມີຄວາມເພິ່ງພໍໃຈໜ້ອຍ

ຄ່າສະເລ່ຍ 1.00-1.50 ໝາຍເຖິງ ມີຄວາມເພິ່ງພໍໃຈໜ້ອຍທີ່ສຸດ

## 3. ຜົນໄດ້ຮັບ

### 3.1 ຂໍ້ມູນທົ່ວໄປຂອງຊາວກະສິກອນ

ຜົນການສຶກສາສໍາພາດຊາວກະສິກອນກຸ່ມຕົວຢ່າງບ້ານຫົວນາ ເມືອງພຽງ ແຂວງໄຊຍະບູລີ ທັງໝົດ ຈໍານວນ 52 ຄອບຄົວ ທາງດ້ານຂໍ້ມູນທົ່ວໄປ ທີ່ປະກອບດ້ວຍ ເພດ, ອາຍຸ, ລະດັບການສຶກສາ, ອາຊີບ, ລາຍຮັບຫຼັກ, ລາຍໄດ້ຕໍ່ເດືອນ ພົບວ່າ: ຊາວກະສິກອນທີ່ຕອບແບບສອບຖາມສ່ວນໃຫຍ່ເປັນເພດຍິງ 32 ຄົນ ກ້ວມເອົາ 61.50%, ເພດຊາຍ 20 ຄົນ ຄິດເປັນ 38.50%. ສວນຊ່ວງອາຍຸຂອງກຸ່ມຕົວຢ່າງສ່ວນໃຫຍ່ແມ່ນມີອາຍຸລະຫວ່າງ 40-49 ປີ ກ້ວມເອົາ 38.50% ເປັນສວນໃຫຍ່, ລອງລົງແມ່ນຊວງອາຍຸ 50-59 ປີ (36.5%), ນອກຈາກນີ້ຍັງມີຊ່ວງອາຍຸລະຫວ່າງ 30-39 ປີ (15,40%), 20-29 ປີ (5,80%) ແລະ 60 ປີ ຕາມລໍາດັບ. ໃນດ້ານລະດັບການສຶກສາສະແດງໃຫ້ເຫັນວ່າ ກຸ່ມຊາວກະຊິກອນມີລະດັບການສຶກສາສ່ວນໃຫຍແມ່ຈົບມັດທະຍົມຕອນຕົ້ນ ທີມີເປີເຊັນສູງເຖິງ 40.40%, ຮອງລົງມາແມ່ນ ຊັ້ນປະຖົມສຶກ ບໍ່ມີການສຶກສາ 26,90%, ຈົບຊັ້ນສູງ 3 ຄົນ ເທົ່າກັບ 5.80% ແລະ ບໍມີການສຶກສາ 6 ຄົນ ເທົ່າກັບ (11.50%). ຍິ່ງໄປກວ່ານີ້ ກຸ່ມຊາວກະສິກອນຍັງມີແຫຼ່ງລາຍຮັບຈາກ ຂາຍຜົນຜະລິດກະສິກໍາ 25 ຄົນ ເທົ່າກັບ 48.10%, ຮັບຈ້າງ 15 ຄົນ ເທົ່າກັບ 28.8%, ຄ້າຂາຍ 7 ຄົນ 13.50% ແລະ ອື່ນອີກໆ ໂດຍຄິດສະເລ່ຍລາຍຮັບຕໍ່ເດືອນສູງສຸດຢູ່ທີ່ 1,500,0001-2,000,000 ກີບ ມີ 26 ຄົນເທົ່າກັບ 50% ແລະ ຕໍ່ສຸດແມ່ນ ລະຫວ່າງ 1,000,0001-1,500,000 ກີບ ມີ 11 ຄົນ ເທົ່າກັບ 21.20%.

### 3.2 ຜົນປະເມີນຄວາມເພິ່ງພໍໃຈຂອງຊາວກະສິກອນ

ຈາກການວິເຄາະຄວາມເພິ່ງພໍໃຈທາງດ້ານການບໍລິການໂດຍແມ່ນຢູ່ໃນລະດັບຄວາມເພິ່ງພໍໃຈຫຼາຍ (ຄ່າສະເລ່ຍຢູ່ທີ່ 3.58) ເຊິ່ງມັນໄດ້ສະແດງອອກໃຫ້ເຫັນໃນແຕ່ລະ ເນື້ອຫາທີ່ປະຊາຊົນສ່ວນໃຫຍ່ແມ່ນມີຄວາມເພິ່ງພໍໃຈຫຼາຍໃນການເຂົ້າຮ່ວມໂຄງການດັ່ງກ່າວ, ແລະ ຍິ່ງໄປກວ່ານັ້ນ ມັນໄດ້ສະແດງໃຫ້ເຫັນເຖິງ ເປີເຊັນຄວາມເພິ່ງພໍໃຈໃນລະດັບສູງເຖິງ 71.63% ເຊິ່ງມັນເປັນໂຕຢືນຢັນວ່າ ປະຊາຊົນສ່ວນໃຫຍ່ແມ່ນມີຄວາມພໍໃຈຫຼາຍຕໍ່ກັບໂຄງການດັ່ງກ່າວ. ໂດຍສະເພາະ ກ່ຽວກັບການການຈັດການຖົ່ວເຫຼືອງທີ່ເປັນລະບຽບ ແລະ ດ້ານໜ່ວຍງານພາກລັດ ແລະ ທາງບໍລິສັດ ໄດ້ໃຫ້ການສະໜັລບສະໜູນ ແລະ ລົງກວດກາຢ່າງສະໜໍ່າສະເໝີ ທີ່ມີຄະແນນຄວາມເພິ່ງພໍໃຈສູງເຖິງ 4.56-4.88 ແລະ ມີເປີເຊັ່ນຄວາມເພິ່ງພໍໃຈສູງເຖິງ 91.15-97.69%,

ເຖິງຢ່າງໃດກໍ່ຕາມ, ໃນການປະເມີນຄວາມເພິ່ງພໍໃຈດ້ານບໍລິການນີ້ ກໍ່ຍັງມີບາງເບື້ອໃນທີ່ເຮັດໃຫ້ປະຊາຊົນຜູ້ເຂົ້າຮ່ວມໂຄງການມີຄວາມເພິ່ງພໍໃຈໃນລະລະດັບພໍໃຈໜ້ອຍ ແລະ ໜ້ອຍທີ່ສຸດ ເຊັ່ນວ່າ: ການຈັດການສິ່ງແວດລ້ອມ (ຂີ້ເຫຍື້ອ) ແລະ ການໄຖດິນເລິກເກີນໄປ ທີ່ມີຄະແນນຄວາມເພິ່ງພໍໃຈຢູ່ລະຫວ່າງ 1.31-1.79 ແລະ ມີເປີເຊັນຄວາມພໍເຂົ້າໃຈຢູ່ 26.15-35.77%. ຈາກຜົນປະເມີນດັ່ງກ່າວ ມັນໄດ້ສົ່ງຜົນໃຫ້ລະດັບຄວາມເພິ່ງພໍໃຈຂອງ ປະຊາຊົນທີ່ເຂົ້າຮ່ວມໂຄງການດັ່ງກ່າວນີ້ ມີຄວາມເພິ່ງພໍໃຈໃນດ້ານການບໍລິການ ຂອງການແມ່ນນອກໃນລະດັບຄວາມພໍໃຈຫຼາຍ ດັ່ງຕາລະລາງທີ 1.

ອີກດ້ານໜຶ່ງໃນການປະເມີນຄວາມເພິ່ງພໍໃຈຕໍ່ກັບຜູ້ເຂົ້າຮ່ວມໂຄງການດັ່ງກ່າວຄື ດ້ານຜົນປະໂຫຍດ ເຊິ່ງເປັນອີກດ້ານ ທີ່ຊີ້ວັດວ່າ ປະຊາຊົນພໍໃຈຕໍ່ກັບໂຄງການດັ່ງກ່າວ ຫຼື ບໍ່. ຈາກການປະເມີນໃນດ້ານດັ່ງກ່າວນີ້ ໄດ້ສະແດງໃຫ້ເຫັນວ່າ ແມ່ນຢູ່ໃນລະດັບຄວາມເພິ່ງພໍໃຈຫຼາຍຄືກັບດ້ານການບໍລິການ ໂດຍມີຄະແນນຄວາມເພິ່ງພໍໃຈຢູ່ໃນລະດັບ 4.07 ແລະ ມີເປີເຊັນຄວາມເພິ່ງພໍໃຈຢູ່ທີ່ 81.40%, ຍິ່ງໄປກວ່ານັ້ນ ແຕ່ລະດ້ານຂອງການປະເມີນຄວາມເພິ່ງພໍໃຈກໍ່ນອນຢູ່ໃນລະດັບຄວາມເພິ່ງພໍໃຈຫຼາຍເກືອບທັງໝົດ ບໍ່ວ່າຈະເປັນ ດ້ານຊາວກະສິກອນມີຄວາມຮູ້ ດ້ານການປູກຖົ່ວຫຼາຍຂຶ້ນ (ຄ່າສະເລ່ຍລວມ 4.40) ທ່ານໄດ້ຮັບປະໂຫຍດຈາກການເຂົ້າຮ່ວມໂຄງການປູກຖົ່ວເຫຼືອງນີ້ ໃນລະດັບຫຼາຍໜ້ອຍປານໃດ (ຄ່າສະເລ່ຍລວມ 4.15) ຮອງລົງມາແມ່ນການໄດ້ເຂົ້າຮ່ວມໂຄງການແມ່ນໄດ້ເຮັດຄຸນນະພາບວິຊິດຂອງທ່ານເປັນແນວໃດ (ຄ່າສະເລ່ຍ 4.38). ນອກຈາກນີ້, ຍັງມີດ້ານອື່ນໆອີກ ເຊິ່ງໃນແຕ່ລະດ້ານແມ່ນນອນລະດັບຄວາມເພິ່ງພໍໃຈຫຼາຍ (ຕາຕະລາງທີ 2) ມັນຈຶ່ງເປັນສິ່ງຢືນຢັນໄດ້ວ່າ ປະຊາຊົນຜູ້ທີ່ເຂົ້າຮ່ວມໂຄງການດັ່ງກ່າວ ແມ່ນມີຄວາມເພິ່ງພໍໃຈຫຼາຍໃນດ້ານຜົນປະໂຫຍດ.

### 3.3 ບັນຫາ, ອຸປະສັກ, ແນວທາງແກ້ໄຂ ແລະ ຂໍ້ສະເໜີຂອງຊາວກະສິກອນ

ຜົນການສຳພາດກຸ່ມຕົວຢ່າງ 52 ຄອບຄົວ ກ່ຽວກັບສຶກສາບັນຫາ, ອຸປະສັກ ແລະ ແນວທາງແກ້ໄຂບັນຫາ ຢູ່ບ້ານຫ້ວນາ ເມືອງພຽງ ແຂວງໄຊຍະບູລີ ຜົນຂອງການສຶກສາໄດ້ສະແດງໃຫ້ເຫັນວ່າ ບັນຫາສິ່ງເສດເຫຼືອຂີ້ເຫຍື້ອ ເປັນບັນຫາບຸລິມະສິດອັນດັບໜຶ່ງ ໂດຍມີຜູ້ຕອບຈຳນວນ 37 ຄົນ ຄິດເປັນ 71.15 % ແລະ ຮອງລົງມາຄືກັບຫາກ່ຽວການໃຊ້ການເຄມີຫຼາຍເກີນໄປ ມີເຖິງ 31 ຄົນຕອບ ກວມເອົາ 59.61 %. ສ່ວນບັນຫາທີ່ພົບເຫັນນ້ອຍ ຫຼື ບໍ່ມີບັນຫາເລີຍຄື ການນຳໃຊ້ນຳຈາກຊົນລະປະທານ, ການກະກຽມດິນ ແລະ ຂໍ້ຄັດແຍງອື່ນໆ (ຕາຕະລາງທີ 3). ນອກຈາກນີ້ ຈາກການປະເມີນດ້ານຫາທີ່ເກີດຂຶ້ນໃນການປູກຖົ່ວເຫຼືອງໃຫ້ບໍລິສັດຈີນ ປະຊາຊົນຍັງໄດ້ມີຂໍ້ສະເໜີເນາະເພື່ອໃຫ້ຫາວິທີແກ້ໄຂ້ກັບສະພາບໂຕຈິງ ແລະ ສອດຄອງກັບການຈັດຕັ້ງປະຕິບັດວຽກງານໂຕຈິງ ເຊັ່ນ: ໃຫ້ທາງບໍລິສັດຈັດສັນບ່ອນເກັບມ້ຽນຂີ້ເຫຍື້ອໃຫ້ເປັນຈຸດ ແລະ ມີຄວາມເປັນລະບຽບ ບໍ່ກະທົບກັບສິ່ງແວດລ້ອມ. ພ້ອມທັງໄດ້ແນະນຳໃຫ້ທາງບໍລິສັດໃຊ້ສານເຄມີໃຫ້ຖືກຕ້ອງຕາມລະບຽບຫຼັກການ, ບໍ່ໃຫ້ປະສົມສານເຄມີຕາມແຄມຮ່ອງຊົນລະປະທານ ແລະ ແຄມທົ່ງນາ. ກ່ຽວກັບການກຽມດິນ ໄດ້ແນະນຳໃຫ້ທາງບໍລິສັດປັບຄືນໄຖໃຫ້ໄຖດິນລົງຕື້ນ ຫຼື ເປັນໄປໄດໃຫ້ໃຊ້ລົງໄຖນາເດີມຕາມ, ບໍ່ຄວນຍົກໝານປູກຖົ່ວເຫຼືອງສູງຫຼາຍ ແລະ ບໍ່ໃຫ້ຂຸດຮ່ອງລະບາຍນ້ຳຢູ່ຕາມແຄມຄັນນາເລິກຫຼາຍ. ສ່ວນດ້ານການແກ້ໄຂຂໍ້ຂັດແຍ່ງແມ່ນໄດ້ສະເໜີໃຫ້ບໍລິສັດວ່າຄວນໃຫ້ກຽດແກ່ປະຊາຊົນ ບໍ່ໃຫ້ເອົາແຕ່ໃຈບໍລິສັດ ແລະ ຂໍໃຫ້ຝ່າຍລັດ ລົງໃກ້ຊິດຕິດແທດກັບປະຊາຊົນ, ມາມີສ່ວນຮ່ວມ ມີບົດບາດໃນການແກ້ໄຂບັນຫາໃຫ້ຫຼາຍຂຶ້ນ. ຍິ່ງໄປກວ່ານັ້ນ ຈາກການສຳພາດກຸ່ມຕົວຢ່າງ ສ່ວນໃຫຍ່ຢາກສະເໜີໃຫ້ບໍລິສັດ, ພາກລັດ ຈັດເຝິກອົບຮົມໃຫ້ປະຊາຊົນຮັບຮູ້ກ່ຽວກັບຂະບວນການປູກຖົ່ວເຫຼືອງໃຫ້ປະຊາຊົນຮັບຮູ້ຢ່າງທົ່ວເຖິງ.

## 4. ວິພາກຜົນ

ຈາກຜົນໄດ້ຮັບຂອງການສຳພາດການເຂົ້າຮ່ວມໂຄງການການປູກຖົ່ວເຫຼືອງຝັກສົດໃຫ້ບໍລິສັດຈີນ ຂອງຢູ່ ບ້ານຫ້ວນາ ເມືອງພຽງ ແຂວງໄຊຍະບູລີ ໂດຍສຶກສາ ຄວາມເພິ່ງພໍໃຈໃນໂຄງການສົ່ງເສີມດັ່ງກ່າວອາດເວົ້າໄດ້ວ່າ: ປະຊາຊົນສ່ວນໃຫ່ຍ ແມ່ນຖືກ ມີຄວາມສົນໃຈ ແລະ ຖືກເປົ້າໝາຍຂອງທາງໂຄງການກຳນົດເອົາ ເນື່ອງຈາກວ່າ ປະຊາຊົນຜູ້ທີເຂົ້າຮ່ວມໃນໂຄງການສວນໃຫຍ່ແມ່ນ ມີເງືອນໄຂສະສະດວກ ແລະ ມີພືນທີໃນການຜະລິດ, ຍິງໄປກວ່ານັ້ນ ປະຊາຊົນທີເຂົ້າຮ່ວມນີ້ ແມ່ນ ຂາດ ວຽກເຮັດງານທຳ ເຊິ່ງອາດເປັນເງືອນໄຂທີເໝາະສົມຂອງການສົ່ເສີມດັ່ງກ່າວ ເພາະເຮັດໃຫ້ປະຊາຊົນມີລາຍຮັບເພີ່ມຂຶ້ນ ແລະ ເຮັດໃຫ້ຄວາມ

ເປັນຢູ່ຂອງປະຊາຊົນສວນໃຫຍ່ນອນໃນລະດັບ ປານກາງ ແລະ ມີລາຍຮັບຢູ່ໃນລະດັບດີ ເມື່ອທຽບກັບ ຄ່າຄອງຊີບທີ່ຖືກກຳນົດໄວ້. ນອກຈາກນີ້, ຜົນຂອງການປະເມີນຄວາມເພິ່ງພໍໃຈໃນດ້ານ ການບໍລິການ ແລະ ຜົນປະໂຫຍດມັນໄດ້ສະແດງໃຫ້ເຫັນວ່າ ປະຊາຊົນຜູ້ທີ່ເຂົ້າຮ່ວມໂຄງການດັ່ງກ່າວ ແມ່ນມີຄວາມເພິງພໍໃຈຫຼາຍທັງສອງດ້ານ ມັນອາດເນື່ອງມາຈາກວ່າ ໂຄງການດັ່ງກ່າວແມ່ນຕອບສະໜອງກັບເງື່ອນໄຂຂອງປະຊາຊົນ ແລະ ຄວາມຕ້ອງການຂອງພວກເຂົາແທ້. ໂດຍຊອດຄ່ອງກັບ ການວິໄຈຂອງ Aned (2018) ຖ້າປະຊົນທີ່ເຂົ້າຮ່ວມໄດ້ຮັບຜົນປະໂຫຍດຈະຜົນການປະເມີນໂຄງການທີ່ລົງໄປສົ່ງເສີມນັ້ນຈະຢູ່ໃນລັບຄວາມເພິ່ງພໍໃຈໃນລະດັບຫຼາຍ.

ເຖິງຢ່າງໃດກໍ່ຕາມ, ໂຄງການດັ່ງກ່າວ ມັນຍັງເຮັດໃຫ້ປະຊາຊົນຜູ້ເຂົ້າຮ່ວມໂຄງການ ຍັງພົບກັບບາງບັນຫາເຊັ່ນ ການຈັດການດ້ານສິງແວດລ້ອມ (ຂີ້ເຫຍື້ອ), ການໃຊ້ສານເຄມີຫຼາຍເກີນໄປ ເຊິ່ງມັນໄດ້ສະແດງອອກໃນລະດັບຄວາມເພິ່ງພໍໃຈ ກ່ຽວກັບດ້ານດັ່ງກ່າວນີ້ຢູ່ໃນລະດັບນ້ອຍທີ່ສຸດ, ອາດເນື່ອງມາຈາກວ່າ ຄວາມເຂົ້າໃຈ ແລະ ຮູບແບບການຈັດການຍັງບໍ່ດີຂອງບໍລິສັດເອງ ຫຼື ຄວາມຮັບຮູ້ຂອງຊາວກະສິກອນເອງ ຈຶ່ງເຮັດເກີນມີບັນຫາດັ່ງກ່າວ ໂດຍມີງານວິໄຈຂອງ David (1995) ໄດ້ຂຽນໄວ້ວ່າ ຖ້າພື້ນທີ່ໄດ້ທີ່ມີການສົ່ງເສີມການຜະລິດກະສິກຳເປັນສິນຄ້າແລ້ວຜົນຕາມກໍ່ຈະເຮັດພື້ນດັ່ງກ່າວໄດ້ຜົນກະທົບທາງສິງແວດຈາກການໃຊ້ການເຄມີເກີນຂະໜາດ ແລະ ວັດສະດຸເສດເຫຼືອຈາກການປູກ ແລະ ມັນຍັງໄປຊອດຄອງກັບບົດລາຍງານຂອງ Report on surveying the boundaries and assessing the quality of farmland in irrigated areas (2020) ອີກດ້ວຍ. ຍິ່ງໄປກວ່ານັ້ນ ທາງບໍລິສັດເອງຍັງຖ່າຍທອດຄວາມຮູ້ ແລະ ເທັກນິກຕ່າງໆໃຫ້ກັບກຸ່ມຜູ້ປູກທົ່ວເຫຼືອງໃຫ້ມີຄວາມຊຳນານໃນເລື່ອງດັ່ງກ່າວ ຈຶ່ງເຮັດໃຫ້ຜົນຜະລິດ ໄດ້ຮັບຄວາມເສຍຫາຍອີກດ້ວຍ.

## 5. ສະຫຼຸບ

ຈາກການສຶກຄວາມຄິດເຫັນຂອງໂຄງການປູກຖົ່ວເຫຼືອງຝັກຊົດໃຫ້ກັບບໍລິສັດຈີນ ຂອງປະຊາຊົນ ບ້ານຫ້ວນາ ເມືອງພຽງ ແຂວງໄຊຍະບູລີ ໂດຍສຶກສາ ປະເມີນຄວາມເພິງພໍໃຈ ແລະ ບັນຫາ, ອຸປະສັກ ແລະ ແນວທາງແກ້ໄຂບັນຫາ ອາດເວົ້າໄດ້ວ່າ: ປະຊາຊົນສ່ວນໃຫ່ຍ ແມ່ນມີຄວາມເພິງພໍໃຈຢູ່ໃນລະດັບຄວາມເພິ່ງພໍໃຈຫຼາຍ ເນື່ອງຈາກວ່າປະຊາຊົນຜູ້ທີເຂົ້າຮ່ວມໃນໂຄງການສວນໃຫຍ່ແມ່ນ ມີເງື່ອນໄຂສະສະດວກ ແລະ ມີພື້ນທີໃນການຜະລິດ, ຍິ່ງໄປກວ່ານັ້ນປະຊາຊົນທີ່ເຂົ້າຮ່ວມນີ້ ແມ່ນຂາດວຽກເຮັດງານທຳ ແລະໂຄງການດັ່ງກ່າວແມ່ນເຮັດໃຫ້ເຮັດໃຫ້ປະຊາຊົນມີລາຍຮັບເພີ່ມຂຶ້ນ ແລະ ເຮັດໃຫ້ຄວາມເປັນຢູ່ຂອງປະຊາຊົນສວນໃຫຍ່ນອນໃນລະດັບປານກາງ. ແຕ່ເຖິງຢ່າງໃດກໍ່ຕາມ ຈາກການສຶກສາຄວາມເຫັນດັ່ງກ່າວຍັງໄດ້ສະແດງໃຫ້ເຫັນບາງບັນຫາທີປະຊາຊົນຍັງບໍ່ພໍໃຈ ເຊັ່ນວ່າ ການຈັດການທາງດ້ານສິ່ງແວດລ້ອມ (ຂີ້ເຫຼື້ອຍ) ແລະ ການນຳໃຊ້ສານເຄມີຫຼາຍໃນພື້ນທີປູກ ໂດຍທີປະຊາຊົນໄດ້ສະເໜີແນວທາງບາງຢ່າງເຊັ່ນ: ໃຫ້ທາງບໍລິສັດຈັບສັນບ່ອນເກັບມ້ຽນຂີ້ເຫຍື້ອໃຫ້ເປັນຈຸດ ແລະ ມີຄວາມເປັນລະບຽບ ບໍ່ກະທົບກັບສິ່ງແວດລ້ອມ. ພ້ອມທັງໄດ້ແນະນຳໃຫ້ທາງບໍລິສັດໃຊ້ສານເຄມີໃຫ້ຖືກຕ້ອງຕາມລະບຽບຫຼັກການ, ບໍ່ໃຫ້ປະສົມສານເຄມີຕາມແຄມຮ່ອງຊົນລະປະທານ ແລະ ແຄມທົ່ງນາ. ຄຳສະເໜີດັ່ງກ່າວນີເປັນແນວທາງເພື່ອແກ້ໄຂບັນດາຂໍ້ຂັດແຍ່ງ ແລະຄວາມເພິງໃຈຂອງປະຊາຊົນຕໍ່ກັບໂຄງການດັ່ງໃນອານາຄົດອີກດ້ວຍ.

## 6. ຂໍ້ຂັດແຍ່ງ

ຂ້າພະເຈົ້າໃນນາມຜູ້ຄົ້ນຄວ້າວິໄຈ ຂໍປະຕິຍານຕົນວ່າຂໍ້ມູນທັງໝົດທີ່ມີໃນບົດຄວາມວິຊາການດັ່ງກ່າວນີ້ ແມ່ນບໍ່ມີຂໍ້ຂັດແຍ່ງທາງດ້ານຜົນປະໂຫຍດກັບພາກສ່ວນໃດ ແລະ ບໍ່ໄດ້ເອື້ອປະໂຫຍດໃຫ້ກັບພາກສ່ວນໃດພາກສ່ວນໜຶ່ງ, ກໍລະນີມີການລະເມີດ ໃນຮູບການໃດໜຶ່ງ ຂ້າພະເຈົ້າມີຄວາມຍິນດີ ທີ່ຈະຮັບຜິດຊອບແຕ່ພຽງຜູ້ດຽວ.

## 7. ເອກະສານອ້າງອີງ


Agriculture office and Cooperatives, Sukhothai Province. (2017). Soybean information for agricultural commodity planning in Sukhothai Province (Thai language).

Aned Chankeu and Kingkanok Chavalidthammavong. (2018). The Satisfaction of Sedimentary Farmers to the Plan Project to Develop Sedimentary Agriculture Careers According to the Community's Needs to Relieve the Drought in Ratchaburi (Thai Language).

Bounhom kitkar. (2019). Monitoring of the production area and the quality of the

production of fresh soybeans at the transplant level by participating farmers. Papers presented in national academic conferences. 11th March 27-28, 2019 (Thai language).

Bounsome Sisaart. (2002). Preliminary research, 2nd edition, Suwiriasasan Publishing House, Sinakarin Thonvihom University, Bangkok Thep Mahanagara (Thai language)

David P. (1995) Amounts of Pesticides Reaching Target Pests: Environmental Impacts and Ethics, Journal of Agricultyural and Environmental Ethics, 8(1), 17-19.

Field and Oïl corps promotion croups. (1997)

National Agricultural Promotion and Training Center, University of Agriculture, Kampen San Campus, Nakhon Ratchasima Primary School. (1995). Soybean cultivation (Thai language).

Ratsaphaphon Tebin. (2017). Soybean planting after cultivation (Thai language).

Rayment, G.E. and F.R. Higginson. 1992.Austrain Laboratory Handbook of Soil and Water Chemical Methods. Inkata Press, Sydney, Australia. 330 p.

Report on surveying the boundaries and assessing the quality of farmland in irrigated areas. (2020). The results of surveying the boundaries of farmland. Department of Agricultural Management and Development, Ministry of Agriculture and Forestry

Sati Khamek and Ulaiwan Ayasuwa. (2018). The satisfaction of farmers who participated in the project of specific fertilizer management for entering the fire area of Ban Pei village, Phetsabuli. Technical conference and presentation of the 3rd national research project. (Thai language)

Somsak SiSambon. (2000). Development of production of fresh soybean pods (Thai language).

Sripadeth Soukhoummaphone, Onkaphong Thapany & Beakthaisong Pramong. (2014). Comparison of yield and yield components of soybeans under the special fertilizer package. P. 4 3 8 ( Thai Language).

Surveying center and the planning of agricultural land use. (2020-2021). Report on the survey and assessment of soil quality in the irrigation water area, Pyon district, Xayabuli province (Lao language).

Surveying center and the planning of agricultural land use. (2021). Manual for surveying and assessing the quality of land (languageLaos).

T. Sarutayophat, C. Nualsri, Q. Santipracha, & V. Saereeprasert. (2007). Characterization and genetic relatedness among 37 yardlong bean and cowpea accessions based on morphological characters and RAPD analysis. Songklanakarin J. Sci. Technol, vol. 29, pp. 591–600.

UMPA Theerayut. (2014). Factors Influencing Customers of Bank for Agriculture and Agricultural Co-operatives in Lamphun Privince on Non-Agricultural Credit Using. in Facculty Agriculture CHIANGMAI UNIVERSITY. pp.37-43

**ຕາຕະລາງ 1:** ລະດັບຄວາມເພິ່ງພໍໃຈຂອງຊາວກະສິກອນບ້ານຫົວນາ ເມືອງພຽງ ແຂວງໄຊຍະບູລີ ຕໍ່ກັບ **ດ້ານການໃຫ້ບໍລິການ**

| I. ດ້ານການບໍລິການ | ຄະແນນຄວາມເພິງພໍໃຈ | | | | | N | ຄ່າສະເລຍ | ຄິດເປັນເປີເຊັ່ນ (%) | SD | ລະດັບຄວາມພໍໃຈ |
|---|---|---|---|---|---|---|---|---|---|---|
| | 5 | 4 | 3 | 2 | 1 | | | | | |
| 1.ມີການຈັດຕັ້ງຝຶກອົບຮົມກ່ຽວກັບຜົນກະທົບທາງດ້ານສິ່ງແວດລ້ອມ ແລະ ອື່ນໆກ່ຽວກັບການປູກຖົ່ວເຫຼືອງ | 23 | 29 | 0 | 0 | 0 | 52 | 4.44 | 88.85 | 0.50 | ພໍໃຈຫຼາຍ |
| 2. ການຈັດການປູກຖົ່ວເຫລືອງຢ່າງເປັນລະບຽບ | 46 | 6 | 0 | 0 | 0 | 52 | 4.88 | 97.69 | 0.32 | ພໍໃຈຫຼາຍທີ່ສຸດ |
| 3. ທາງໜ່ວຍງານພາກລັດ ແລະ ທາງບໍລິສັດໄດ້ໃຫ້ການສະຫນັບສະຫນູນ ແລະ ລົງກວດສອບຢ່າງສະຫມ່ໍາສະເໝີ | 29 | 23 | 0 | 0 | 0 | 52 | 4.56 | 91.15 | 0.50 | ພໍໃຈຫຼາຍທີ່ສຸດ |
| 4. ການຈັດການບັນຫາສິ່ງແວດລ້ອມ (ຂີ້ເຫຍື້ອ....) | 0 | 0 | 8 | 25 | 19 | 52 | 1.79 | 35.77 | 0.69 | ພໍໃຈນ້ອຍ |
| 5. ການໄຖດິນປູກຖົ່ວເຫຼືອງເລິກໂພດ | 0 | 0 | 0 | 16 | 36 | 52 | 1.31 | 26.15 | 0.46 | ພໍໃຈນ້ອຍທີ່ສຸດ |
| 6. ເຮັດຮ່ອງນໍ້າເລິກ | 0 | 0 | 18 | 31 | 3 | 52 | 2.29 | 45.77 | 0.57 | ພໍໃຈປານກາງ |
| 7. ຄັນນາເປ່ເພ່ | 0 | 0 | 46 | 6 | | 52 | 2.88 | 57.69 | 0.32 | ພໍໃຈປານກາງ |
| 8. ໃຊ້ສານເຄມີຫລາຍເກີນໄປ | 0 | 0 | 15 | 25 | 12 | 52 | 2.06 | 41.15 | 0.72 | ພໍໃຈຫຼາຍ |
| 9. ຫຼັງຈາກເກັບກ່ຽວຖົ່ວເຫລືອງແລ້ວ ພື້ນທີ່ເຮັດການຜະລິດໄດ້ມີການປັບປຸງໃຫ້ຄືນສູ່ສະພາບເດີມບໍ | 8 | 25 | 19 | 0 | 0 | 52 | 3.79 | 75.77 | 0.69 | ພໍໃຈຫຼາຍ |
| ***ສະເລ່ຍ*** | | | | | | | **3.58** | **71.63** | **0.49** | **ພໍໃຈຫຼາຍ** |

**ຕາຕະລາງ 2:** ລະດັບຄວາມເພິ່ງພໍໃຈຂອງຊາວກະສິກອນບ້ານຫ້ວນາ ເມືອງພຽງ ແຂວງໄຊຍະບູລີ ຕໍ່ກັບ **ການໄດ້ຮັບຜົນປະໂຫຍດ**

| II. ດ້ານຜົນປະໂຫຍດ | ຄະແນນຄວາມເພິ່ງພໍໃຈ | | | | | N | ຄ່າສະເລຍ | ຄິດເປັນເປີເຊັນ (%) | SD | ລະດັບຄວາມພໍໃຈ |
|---|---|---|---|---|---|---|---|---|---|---|
| | 5 | 4 | 3 | 2 | 1 | | | | | |
| 1. ທ່ານໄດ້ຮັບປະໂຫຍດຈາກການເຂົ້າຮ່ວມໂຄງການປູກຖົ່ວເຫຼືອງນີ້ ໃນລະດັບຫຼາຍນ້ອຍປານໃດ? | 12 | 35 | 5 | 0 | 0 | 52 | 4.15 | 8.69 | 0.39 | ພໍໃຈຫຼາຍ |
| 2.ທ່ານໄດ້ຮັບປະໂຫຍດ (ໄດ້ເງິນຄ່າເຊົ່າ) ມີຄວາມພໍໃຈນ້ອຍຫຼາຍປານໃດ? | 19 | 31 | 2 | 0 | 0 | 52 | 4.33 | 86.54 | 0.54 | ພໍໃຈຫຼາຍ |
| 3. ການເຂົ້າຮ່ວມໂຄງການແມ່ນໄດ້ປຽນ ຄຸນະພາບວິຊີວິດຂອງທ່ານແນວໃດ? | 22 | 28 | 2 | 0 | 0 | 52 | 4.38 | 87.69 | 0,56 | ພໍໃຈຫຼາຍ |
| 4. ຜົນຕອບແທນ ທີ່ໄດ້ ຄຸ້ມກັບການປູກພືດກະສິກຳຊະນິດອື່ນ ຫຼື ບໍ່ | 5 | 40 | 7 | 0 | 0 | 52 | 3,96 | 79.23 | 0.48 | ພໍໃຈຫຼາຍ |
| 5. ການຕອບສະຫນອງດ້ານທືນ ແລະ ເຕັກນິກວິຊາການ ຫຼາຍນອ້ຍປານໃດ | 0 | 52 | 0 | 0 | 0 | 52 | 4.00 | 80.00 | 0.00 | ພໍໃຈຫຼາຍ |
| 6. ທາງບໍລິສັດ ແລະ ຝ່າຍລັດ ໄດ້ໃຫ້ຄວາມຮູ້ ທາງເຕັກນິກ ແລະ ວິຊາການຕ່າງໆ ໃຫ້ແກ່ທ່ານມາປັບໃຊ້ ເພື່ອພັດທະນາສີມືແຮງງານຫຼາຍນອ້ຍປານໃດ | 13 | 34 | 5 | 0 | 0 | 52 | 4.15 | 83.08 | 0.57 | ພໍໃຈຫຼາຍ |
| 7. ໄດ້ຮັບການດູແລຊ່ວຍເຫຼືອຈາກໜ່ວຍງານຕ່າງໆຄືແນວໃດ | 4 | 39 | 9 | 0 | 0 | 52 | 3.90 | 78.08 | 0.49 | ພໍໃຈຫຼາຍ |
| 8. ເກີດຂໍ້ຂັດແຍງນ້ອຍຫຼາຍປານໃດກັບບໍລິສັດ ແລະ ພາກສ່ວນອື່ນໆ | 1 | 23 | 24 | 4 | 0 | 52 | 3.40 | 68.08 | 0.66 | ພໍໃຈຫຼາຍ |
| 9. ຊາວກະສິກອນມີຄວາມຮູ້ດ້ານການປູກຖົ່ວເຫຼືອງເພີ່ມຂື້ນ | 24 | 25 | 3 | 0 | 0 | 52 | 4.40 | 88.08 | 0.60 | ພໍໃຈຫຼາຍ |
| 10. ການຕອບສະຫນອງທາງທືນເຂົ້າໃນການ ຜະລິດກະສິກຳ ໃຫ້ແກ່ປະຊາຊົນໃນການຜະລິດກະສິກຳຊະນິດອື່ນບໍ | 0 | 52 | 0 | 0 | 0 | 52 | 4.00 | 80.00 | 0.00 | ພໍໃຈຫຼາຍ |
| 11. ຊາວກະສິກອນມີສິດສະເໜີ ແລະ ຮຽກຮ້ອງຜົນເວລາມີບັນຫາໄດ້ຖືກແກ້ໄຂບໍ | 11 | 35 | 6 | 0 | 0 | 52 | 4.10 | 81.92 | 0.56 | ພໍໃຈຫຼາຍ |
| ***ສະເລ່ຍ*** | | | | | | | **4.07** | **81.40** | **0.44** | **ພໍໃຈຫຼາຍ** |

**ຕາຕະລາງ 3:** ສະແດງບັນຫາ, ອຸປະສັກ ແລະ ວິທີແກ້ໄຂ ຂອງຜູ້ທີ່ເອົາດິນນາໃຫ້ບໍລິສັດເຊົ່າ 52 ຄົນ

| **ບັນຫາສິ່ງເສດເຫຼືອຂີ້ເຫຍື້ອ** | **ຈ/ນ (ຄົນ)** | **ສ່ວນຮ້ອຍ (%)** |
|---|---|---|
| ມີຫຼາຍ | 37 | 71,15 |
| **ບັນຫາການນຳໃຊ້ສານເຄມີ** | | |
| ໃຊ້ຫຼາຍ | 31 | 59,61 |
| **ບັນຫາການກະກຽມດິນ** | | |
| ໄຖດິນເລິກ | 29 | 55,78 |
| ຍົກໜານປູກສູງ | 11 | 21,15 |
| **ບັນຫາຂອງການນຳໃຊ້ນ້ຳຊົນລະປະທານ** | | |
| ມີລະບຽບການຈັດການທີ່ດີແລ້ວ | 40 | 76,92 |
| ມີການຍາດນ້ຳກັນ | 10 | 19,23 |
| **ບັນຫາຂໍ້ຂັດແຍ້ງອື່ນໆ** | | |
| ມີຫລາຍ | 24 | 46,16 |
| ບໍ່ມີຫຍັງ | 28 | 53,84 |
| **ວິທີແກ້ໄຂ** | | |
| ໃຫ້ມີບ່ອນຈັດສັນມ້ຽນສິ່ງເສດເຫຼືອຂີ້ເຫຍື້ອເປັນຈຸດ | 19 | 36,53 |
| ຫຼຸດຜ່ອນການນຳໃຊ້ສານເຄມີລົງ | 14 | 26,92 |
| ບໍ່ຄວນໄຖດິນລົງເລິກຫຼາຍ | 11 | 21,16 |
| ບໍ່ໃຫ້ເຮັດຮ່ອງລະບາຍນ້ຳເລິກ | 8 | 15,39 |
| **ຂໍ້ສະເໜີ** | | |
| ຈັດເຝິກອົບຮົມໃຫ້ປະຊາຊົນຮັບຮູ້ເຕັກນິກການປູກ ແລ້ວລະດູການຕໍ່ໄປມອບໃຫ້ປະຊາຊົນປູກແລ້ວຂາຍໃຫ້ບໍລິສັດ | 25 | 48,08 |
| ເພື່ອຄ່າເຊົ່າດິນນາໃຫ້ສູງຂຶ້ນກວ່າເກົ່າ | 27 | 51,92 |